ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທະນາຄານແຫ່ງ ສປປ ລາວ ຈັດຕັ້ງຂະບວນການປູກຕົ້ນໄມ້




ເນື່ອງໃນໂອກາດວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນ ວັນທີ 1 ມິຖຸນາ 2022, ສາມອົງການຈັດຕັ້ງມະຫາຊົນ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງຂະບວນການປູກຕົ້ນໄມ້ຂຶ້ນທີ່ດິນເປົ່າວ່າງແຄມຖະໜົນ 450 ປີ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ ພ້ອມດ້ວຍ ທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ, ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ ແລະ ຄະນະກົມ ທຫລ, ພະນັກງານ ທຫລ ເຂົ້າຮ່ວມ.

ໃນການປູກຕົ້ນໄມ້ຄັ້ງນີ້ແມ່ນເພື່ອເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໃນການເພີ່ມເນື້ອທີ່ປົກຫຸ້ມສີຂຽວໃນທົ່ວປະເທດໃຫ້ກວມອັດຕາສູງຂຶ້ນ 70% ພ້ອມທັງເປັນການປູກຈິດສຳນຶກໃຫ້ແກ່ພະນັກງານ ທຫລ ໃນການປົກປັກຮັກສາສິ່ງແວດລ້ອມ ແລະ ຊັບພະຍາກອນທາງທຳມະຊາດໃຫ້ມີຄວາມຍືນຍົງ. ຈຳນວນເບ້ຍໄມ້ທີ່ໄດ້ນຳມາປູກໃນຄັ້ງນີ້ແມ່ນມີຈຳນວນ 200 ເບ້ຍ ເຊິ່ງເປັນເບ້ຍໄມ້ທີ່ສາມາດຈະເລີນເຕີບໂຕໄດ້ດີກັບສະພາບດິນຟ້າອາກາດຂອງປະເທດ ແລະ ສ້າງຄວາມອຸດົມສົມບູນໃຫ້ພື້ນທີ່ເປົ່າວ່າງໃຫ້ກາຍເປັນຜືນປ່າໃນອານາຄົດ.









# ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.